ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ຫ້ອງການ

ເລກທີ 3527 /ຫກ
ນະຄອນຫລວງວຽງຈັນ, ວັນທີ 12 ທັນວາ 2022

# ແຈ້ງການ

**ເຖິງ:** ນັກຊ່ຽວຊານບັນຊີ ຄົນລາວ ແລະ ຄົນຕ່າງປະເທດ ທີ່ເຄື່ອນໄຫວປະກອບອາຊີບຢູ່ໃນ ສປປ ລາວ.
**ເລື່ອງ:** ການສະໝັກເປັນນັກຊ່ຽວຊານບັນຊີອາຊຽນ (ASEAN Chartered Professional Accountant) ແລະ ການລົງທະບຽນນັກຊ່ຽວຊານບັນຊີຕ່າງປະເທດທີ່ຖືກຮັບຮອງ (Registered Foreign Professional Accountant).

- ອີງຕາມ ກົດໝາຍ ວ່າດ້ວຍການບັນຊີ ສະບັບເລກທີ 47/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ກົດໝາຍ ວ່າດ້ວຍການກວດສອບອິດສະລະ ສະບັບເລກທີ 51/ສພຊ, ລົງວັນທີ 22 ກໍລະກົດ 2014;
- ອີງຕາມ ສົນທິສັນຍາ ລະຫວ່າງບັນດາປະເທດສະມາຊິກອາຊຽນ ວ່າດ້ວຍ ການຮັບຮູ້ເຊິ່ງກັນ ແລະ ກັນ ດ້ານການບໍລິການບັນຊີ ທີ່ໄດ້ເຊັນລົງນາມຄັ້ງວັນທີ 13 ພະຈິກ 2014;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການ ກະຊວງການເງິນ ສະບັບເລກທີ 6118/ກງ, ລົງວັນທີ 10 ທັນວາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມຄຸ້ມຄອງການບັນຊີ ກະຊວງການເງິນ ສະບັບເລກທີ 1760/ກຄຊ, ລົງວັນທີ 08 ທັນວາ 2022.

ຫ້ອງການ ກະຊວງການເງິນ ຂໍແຈ້ງມາຍັງ ນັກຊ່ຽວຊານບັນຊີ ຄົນລາວ ແລະ ຄົນຕ່າງປະເທດ ທີ່ເຄື່ອນໄຫວປະກອບອາຊີບຢູ່ໃນ ສປປ ລາວ ໃຫ້ ຍື່ນຄຳຮ້ອງສະໝັກເປັນນັກຊ່ຽວຊານບັນຊີອາຊຽນ (ASEAN Chartered Professional Accountant) ແລະ ລົງທະບຽນນັກຊ່ຽວຊານບັນຊີຕ່າງປະເທດທີ່ຖືກຮັບຮອງ (Registered Foreign Professional Accountant) ຢູ່ທີ່ຫ້ອງການ ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ ເຊິ່ງມີລາຍລະອຽດດັ່ງນີ້:

1. ນັກຊ່ຽວຊານບັນຊີ ຄົນລາວ ຜູ້ທີ່ມີຄວາມສົນໃຈ ສາມາດຍື່ນຄຳຮ້ອງສະໝັກເປັນນັກຊ່ຽວຊານບັນຊີອາຊຽນ ເພື່ອສາມາດອອກໄປເຄື່ອນໄຫວປະກອບອາຊີບ ໃນບັນດາປະເທດສະມາຊິກອາຊຽນ ໄດ້ຢ່າງອິດສະລະ ແລະ ຖືກຕ້ອງຕາມລະບຽບການ ຂອງສະຫະພັນນັກບັນຊີອາຊຽນ;
2. ນັກຊ່ຽວຊານບັນຊີ ຄົນຕ່າງປະເທດ ທີ່ມີໃບຢັ້ງຢືນນັກຊ່ຽວຊານບັນຊີອາຊຽນ ໃຫ້ມາລົງທະບຽນນັກຊ່ຽວຊານບັນຊີຕ່າງປະເທດທີ່ຖືກຮັບຮອງ ເພື່ອສາມາດ ຄຸ້ມຄອງ ຕິດຕາມ ການເຄື່ອນໄຫວປະກອບອາຊີບຢູ່ ສປປ ລາວ ໄດ້ຢ່າງຖືກຕ້ອງຕາມລະບຽບການ ທັງ ພາຍໃນ ແລະ ອາຊຽນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

**ຫົວໜ້າຫ້ອງການ**

ສົມບູນ ອິນທະປັດຖາ

ຕິດຕໍ່ພົວພັນ ຫຼື ສອບຖາມຂໍ້ມູນເພີ່ມເຕີມ:
1. ກົມຄຸ້ມຄອງການບັນຊີ ກະຊວງການເງິນ ໂທ: 020 2918 0322;
2. ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ໂທ: 020 5414 6611.